ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການກະຊວງ

ເລກທີ: 1545 - /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 15/05/2026

ໂຄງການເສີມສ້າງທັກສະທີ່ເປັນບຸລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ
ລະຫັດປະມູນເລກທີ : RFQ C2.1-C-7

# ໜັງສືເຊີນ ເຂົ້າຮ່ວມການປະມູນສົມທຽບລາຄາ

1. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບຸລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ, ໄດ້ຮັບອະນຸມັດງົບປະມານ ປະຈໍາສົກປີ 2026 ເພື່ອດໍາເນີນການ ປະມູນຈັດຊື້-ຈັດຈ້າງ **ບໍລິສັດ ອອກແບບ ໂພສເຕີ, ແຜ່ນພັບ ໂຄສະນາ ແລະ ຈັດພິມ** ສໍາລັບ ຈຸດບໍລິການຈັດຫາງານ ຂັ້ນສູນກາງ ແລະ ຂັ້ນແຂວງ ທົ່ວປະເທດ. ດ້ວຍການປະມູນແບບສົມທຽບລາຄາ.
2. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບຸລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງປະມູນແບບສົມທຽບລາຄາ ສໍາລັບການຈັດຊື້-ຈັດ **ບໍລິສັດ ອອກແບບ ໂພສເຕີ, ແຜ່ນພັບ ໂຄສະນາ ແລະ ຈັດພິມ** ສໍາລັບ ຈຸດບໍລິການຈັດຫາງານ ຂັ້ນສູນກາງ ແລະ ຂັ້ນແຂວງ ທົ່ວປະເທດ. ໄລຍະເວລາໃນການສົ່ງມອບ ຫລື ການບໍລິການແມ່ນ **[60 ວັນ]**.
3. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນ ການປະມູນສົມທຽບລາຄາ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ **10:00 ໂມງ, ວັນທີ 29 ພຶດສະພາ 2026,** ທີ່ **ຫ້ອງປະຊຸມກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຊັ້ນ 3)** ບ້ານ ໂພນສະຫວ່າງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ **020 91114568. Email:** ctvs.bee368@gmail.com; **cc:** psgproject.proc@gmail.com ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ **10:10 ໂມງ, ວັນທີ 29 ພຶດສະພາ 2026** ໂດຍຊ້ອງໜ້າ ຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

**ຫົວໜ້າຫ້ອງການ**
**(ຫົວໜ້າໂຄງການ)**

ບຸນຍອດ ຈັນທະວອນ